# ບົດທີ 17

# ການກຳເນີດຂອງສິນມະຫາສະນິດ




ໃນບົດຮຽນຕໍ່ໄປນີ້ ທ່ານຈະຮຽນເລື່ອງທັງສາມພິທີດ້ວຍກັນ
ທັງຈະຮູ້ວ່າທັງສາມນີ້ກ່ຽວຂ້ອງກັນຢ່າງໃດ?

## ວັນພະທັດ

**1** ກ່ອນຈະຮຽນຕໍ່ໄປເຮົາຈະຮຽນຄືນໃນເລື່ອງທີ່ຜ່ານມາກ່ອນ.
ກ. ແມ່ນເທດສະການໃດທີ່ຈວນຈະມາເຖິງ? ________________________________
ຂ. ໃນວັນພະທັດພະອົງໃຊ້ສາວົກສອງຄົນໃດຈັດແຈງປັດສະຄາໄວ້? (ລກ 22:8) ________
ຄ. ເຂົາອອກຈາກບ້ານໃດ? (ເບິ່ງແຜນທີ່ໜ້າປົກບົດທີ 2 ໜ້າ 19 ອັກສອນ “ທ”) _________
ງ. ໄປເຖິງກຸງໃດແຕ່ເຊົ້າ? (ແຜນທີ່ດຽວກັນນັ້ນ ອັກສອນ “ກ”) ____________________
ຈ. ເຂົາຊື້ຕົວຫຍັງ? __________________________________________________
ສ. ເພື່ອຖະຫວາຍບ່ອນໃດ? (ແຜນທີ່ນັ້ນ ອັກສອນ “ງ”) _________________________
ຊ. ໃນພະວິຫານມີ ________7000 ຄົນ ເປັນຜູ້ບໍລິການໃນການຖະຫວາຍບູຊາ. (ຕື່ມຄວາມ)
ຍ. ໃນສະໄໝເທດສະການນັ້ນເຂົາຂ້າແກະບູຊາຈັກໂຕ? _________________________
ດ. ເຂົາຂ້າແກະບາດດຽວໂດຍມັນຈະບໍ່ຮ້ອງປຽບທຽບກັບໃຜທີ່ບໍ່ຕອບຜູ້ຟ້ອງ? __________
ຕ. ພວກປະໂລຫິດຖອກຫຍັງໃສ່ແທ່ນບູຊາ? ________________________________
ຖ. ຫຼັງຈາກການຂ້າແກະບູຊາໃນພະວິຫານພວກສາວົກເອົາລູກແກະນັ້ນໄປປີ້ງກິນໃນຫ້ອງໃດ?
_____________________________________________________________

**2** ໃຫ້ທ່ານອ່ານ ມທ 26:17-19.
ກ. ໃນຂໍ້ 17 ນັ້ນເຂົາເອີ້ນວ່າເປັນເທດສະການໃດ? _____________________________
ຂ. ໃນຂໍ້ 18 ເອີ້ນຊື່ວ່າເປັນເທດສະການໃດ? ________________________________

**3** ເທດສະການນັ້ນມີສອງຊື່ ເຂົາລະນຶກເຖິງທີ່ເຂົາຖືກປົດປ່ອຍຈາກການເປັນທາດຂອງເອຢິບ ຫຼາຍຮ້ອຍປີກ່ອນ.
ກ. ເທດສະການທີ່ກິນເຂົ້າຈີ່ບໍ່ມີເຊື້ອແປ້ງ ມີຊື່ວ່າຢ່າງໃດ? ________________________
ຂ. ເທດສະການປັດສະຄາມີອີກຊື່ໜຶ່ງວ່າຢ່າງໃດ? ______________________________

**4** ພວກຄົນຢິວລະນຶກເຖິງການຮັບປົດປ່ອຍຈາກການເປັນທາດໃນປະເທດເອຢິບໃນເທດສະການໃດ? (ມີສອງຊື່) _________________________ _________________________

**5** ເທດສະການປັດສະຄາ (ຄືເທດສະການກິນເຂົ້າຈີ່ບໍ່ມີເຊື້ອແປ້ງ) ເປັນທີ່ລະນຶກເຖິງຫຍັງໃນປະຫວັດສາດຊາດຢິວ? _______________________________________________

**6** ໃຫ້ທ່ານອ່ານຈາກພະທຳອົບພະຍົບ 12:15. ກ່ອນທີ່ເຂົາຈະອອກຈາກເອຢິບໄປ ເຂົາຟ້າວຟັ່ງກິນເຂົ້າຈີ່ຢ່າງໃດ? ________________________________________________

**7** ກ. ຕາມພະທຳອົບພະຍົບ 12:15 ເທດສະການນັ້ນຄົບໃນຈັກວັນ? ________________

ຂ. ຕາມໃນພະທຳອົບພະຍົບ 12:6 ແລະ 12:8 ເທດສະການນັ້ນຈະເລີ້ມຕົ້ນໂດຍການລ້ຽງ ພິເສດ. ການລ້ຽງທີ່ໃຫຍ່ນັ້ນຕົກວັນທີເທົ່າໃດໃນເດືອນ? ______________________ . (ເດືອນນັ້ນເປັນເດືອນທີໜຶ່ງຂອງປະຕິທິນຢິວ)

**8** ໃນປີທີ່ເຂົາຂ້າພະເຢຊູ ວັນທີ 14 ຂອງເດືອນນັ້ນຕົກໃນວັນພະຫັດ. ດັ່ງນັ້ນພະເຢຊູກັບພວກສາວົກໄດ້ຮ່ວມການລ້ຽງເລີ້ມຕົ້ນປັດສະຄາວັນໃດໃນອາທິດ? ________________________

**9** ໃຫ້ກັບໄປເປີດມັດທາຍບົດທີ 26 ອີກ.

ກ. ໃນຂໍ້ 18 ພະເຢຊູສັ່ງໃຫ້ເປໂຕກັບໂຢຮັນບອກດັ່ງຕໍ່ໄປນີ້: "ອາຈານກ່າວວ່າ ເວລາ ____________ ຂອງເຮົາມາໃກ້ແລ້ວເຮົາຈະຖືສິນ _____________ ທີ່ເຮືອນຂອງທ່ານພ້ອມກັບພວກສາວົກຂອງເຮົາ" (ຈົ່ງຕື່ມຄວາມທີ່ຂາດ)

ຂ. ການນີ້ຕົກໃນທ້າຍສະໄໝປີໃດ? ______________________________________

ຄ. ທີ່ພະເຢຊູບອກວ່າ "ເວລາກຳນົດຂອງເຮົາມາໃກ້ແລ້ວ" ພະອົງອ້າງເຖິງຫຍັງ? ________

**10** ກ. ຕັ້ງແຕ່ເດືອນ 1 ແລງວັນທີ 14 ພວກຢິວເລີ້ມສະຫຼອງເທດສະການໃດ? ____________

ຂ. ເທດສະການນັ້ນມີອີກຊື່ໜຶ່ງວ່າຢ່າງໃດ? _________________________________

ຄ. ໃນເທດສະການນັ້ນ ເຂົາລະນຶກເຖິງການຮັບປົດປ່ອຍຈາກຫຍັງ? ________________

ງ. ກ່ອນຈະຈາກເອຢິບໄປເຂົາກິນເຂົ້າຈີ່ຢ່າງໃດໃນ 7 ວັນ? ______________________

ຈ. ພະເຢຊູຮ່ວມກັບພວກສາວົກສະຫຼອງເທດສະການນັ້ນວັນໃດ? __________________

ສ. ມື້ຕໍ່ໄປນັ້ນພະອົງຈະເປັນຢ່າງໃດ? ______________________________________

ຊ. ເທດສະການນັ້ນມີຄວາມໝາຍຫຼາຍໃນປະຫວັດສາດຊາດຢິວເພາະວ່າເຂົາຮັບການປົດປ່ອຍຈາກການເປັນທາດຂອງໃຜ? ______________________________________

ຍ. ພະເຢຊູຕາຍໃນເວລານັ້ນເພື່ອຈະໃຫ້ພວກເຮົາຮັບການປົດປ່ອຍຈາກການເປັນທາດຫຍັງ? ______________________________________________________________

**11** ໃຫ້ອ່ານ ມທ 26:20-25.



ກ. ໃນຂໍ້ 20 ພະອົງຮ່ວມຫຍັງກັບພວກສາວົກ? _________

*ຄົນໃນປະເທດປາແລັດສະຕິນສະໄໝນັ້ນບໍ່ໄດ້ນັ່ງໂຕະແຕ່ເຂົານອນແຄງຂ້າງຊ້າຍແລະໃຊ້ມືຂວາກິນ.*

ຂ. ໂຢຮັນ 13:23-25 ບອກວ່າມີສາວົກຄົນໜຶ່ງທີ່ພະເຢຊູຊົງຮັກໄດ້ ________ ລົງອີງພະຊວງຂອງພະອົງ. (ຕື່ມຄວາມ)

ຄ. ລູກາ 7:37-38 ເຫັນວ່າຍິງຄົນນັ້ນຢືນຂ້າງຫຼັງພະເຢຊູ ເອົານ້ຳມັນຫອມສົງຕີນພະອົງ. ເມື່ອເວລາກິນເຂົ້າ ພະເຢຊູວາງຕົວຢ່າງໃດ? ______________________________

**12** ໃຫ້ອ່ານ ມທ 26:26-29.

ກ. ໃນຂໍ້ 26 ພະອົງຊົງຈັບເຂົ້າຈີ່ມາໂດຍຊົງກ່າວວ່າ "ນີ້ແຫຼະ ຄືກາຍຂອງ ________ ." (ຕື່ມ)

ຂ. ໃນຂໍ້ 28 ພະອົງຊົງຈັບເອົາຈອກໂດຍຊົງກ່າວວ່າ "ນີ້ແຫຼະ ຄືເລືອດຂອງ _______ ." (ຕື່ມ)

**13** ກ. ແມ່ນຫຍັງທີ່ປຽບທຽບພະກາຍຂອງພະອົງ? ________________________________

ຂ. ສິ່ງໃດປຽບທຽບເລືອດຂອງພະອົງ? ______________________________________

**14** ກ. ທີ່ພະອົງຮ່ວມໂຕະກັບສາວົກຈະເປັນໂຕະຕ່ຳຫຼືສູງ? ___________________________

ຂ. ໃນເວລາກິນເຂົ້າພະເຍຊູວາງຕົວຢ່າງໃດ? __________________________________

**15** ໃຫ້ອ່ານ ມທ 26:28 ອີກ.

ກ. ພະເຍຊູບອກວ່າເລືອດນັ້ນເປັນສິ່ງທີ່ກ່ຽວກັບຫຍັງ? ___________________________

ຂ. ພະສັນຍານັ້ນຄືຫຍັງ? (ເລືອກ)

______ ການຕົກລົງກັນລະຫວ່າງສອງຝ່າຍ

______ ການເຈລະຈາກັນ

______ ຄວາມຕິດໃຈ

**16** ຕາມໃນພະຄຳພີ ຄຳວ່າ "ພະສັນຍາ" ອ້າງເຖິງການຕົກລົງກັນລະຫວ່າງໃຜ? (ເລືອກ)

ກ. ພະເຈົ້າແລະພະຍາມານ

ຂ. ມະນຸດສອງຄົນ

ຄ. ພະເຈົ້າແລະໄພ່ພົນຂອງພະອົງ

**17** ຄຳວ່າ "ພະສັນຍາ" ໃນພະຄຳພີ ອ້າງເຖິງການຕົກລົງກັນລະຫວ່າງໃຜກັບໃຜ?

__________________________________ __________________________________

**18** ມັດທາຍ 26:28ເວົ້າເຖິງ "ພະສັນຍາ" ໃນລູກາ 22:20 ອ້າງເຖິງ "ພະສັນຍາ ______ ." (ຕື່ມ)

**19** ຖ້າມີພະສັນຍາໃໝ່ກໍຄວນຈະມີພະສັນຍາເດີມອີກດ້ວຍຄື: ຄຳສັນຍາຕາມພະບັນຍັດ (ພະກົດໝາຍ) ທີ່ພະເຈົ້າໃຫ້ໂມເຊ. ຄຳສັນຍາໃໝ່ຄືຄຳສັນຍາໃນເລືອດຂອງໃຜ? ________ ຄຳສັນຍາໃໝ່ລະຫວ່າງພະເຈົ້າກັບໄພ່ພົນຂອງພະເຈົ້າອີງຕາມຄວາມຕາຍຂອງໃຜ? ______

**20** ກ. ຄຳວ່າ "ຈອກ" ໃນສິນມະຫາສະໜິດ ປຽບທຽບຄວາມຕາຍຂອງໃຜ? ______________

*ຄຳສັນຍາເດີມຂອງໂມເຊໝົດກຳນົດໄປແລ້ວຄຳສັນຍາໃຫ້ມາເລີ້ມຕົ້ນໃນຄວາມຕາຍຂອງພະອົງ.*

ຂ. ຄຳສັນຍາຄືການຕົກລົງກັນລະຫວ່າງຈັກຝ່າຍ? ______________________________

ຄ. ຄຳສັນຍາໃໝ່ນີ້ຄືການຕົກລົງລະຫວ່າງໃຜກັບໃຜ? ___________________________

**21** ໃຫ້ອ່ານມັດທາຍ 26:29 ໃນຂໍ້ນັ້ນພະອົງອ້າງເຖິງເຫດການທີ່ຈະມາໃນອະນາຄົດ. ນ້ຳອະງຸ່ນນັ້ນປຽບທຽບກັບຄວາມສຸກວັນທີ່ຈະດື່ມອັນໃໝ່ໃນລາຊະແຜ່ນດິນພະບິດາຈະເປັນຢ່າງໃດ? (ເລືອກ)

ກ. ພະເຢຊູກັບເຫຼົ່າສາວົກຈະຢູ່ຮ່ວມກັນອີກ.

ຂ. ພະເຢຊູກັບພວກສາວົກຈະແຍກອອກຈາກກັນ.

ຄ. ເຂົາຈະມີຄວາມທຸກ.

ງ. ເຂົາຈະມີຄວາມສຸກ.

ຈ. ເຂົາຍັງຈະຢູ່ໃນສະພາບເດີມ.

ສ. ເຂົາຈະຢູ່ໃນສະຖານະການໃໝ່.

**22** ທີ່ຈະດື່ມນ້ຳອະງຸ່ນໃໝ່ໃນລາຊະແຜ່ນດິນພະບິດາໝາຍເຖິງຫຍັງ? (ເລືອກ)

ກ. ການຮ່ວມສາມັກຄີທຳໃນສະຫວັນ.

ຂ. ການຮ່ວມສາມັກຄີທຳຮັບສິນມະຫາສະນິດໃນໂລກນີ້.

ຄ. ການຮັບອາຫານດ້ວຍກັນ.

**23** ໃນມັດທາຍ 26:29 ພະເຢຊູອ້າງເຖິງການດື່ມນ້ຳອະງຸ່ນໃໝ່ໃນບ່ອນໃດ? ____________

**24** ໃຫ້ອ່ານ ມທ 26:31-35 ໃນຂໍ້ 31 ພະອົງກ່າວອ້າງຈາກພະທຳໃດບົດແລະຂໍ້ໃດໃນພະຄຳພີເດີມ? (ເບິ່ງຂໍ້ອ້າງລຸ່ມໜ້ານັ້ນ) ___________________ (ພະທຳ "ຊາຂາລີຢາ" ນັ້ນບໍ່ໄດ້ພິມອອກເທື່ອໃນພະຄຼິດສະຕະທຳຄຳພີ ພາກພະສັນຍາເດີມສະບັບ 1979)

**25** ກ. ຫຼັງຈາກວັນທີ່ພະອົງກ່າວຄຳນັ້ນ ແມ່ນໃຜຖືກປະຫານຊີວິດ? __________

ຂ. ແມ່ນໃຜທີ່ແຕກຊະກັນໄປ? ________________________________

ຄ. ດັ່ງນັ້ນ "ຜູ້ລ້ຽງແກະ" ອ້າງເຖິງໃຜ? ____________________________



ງ. ຝູງແກະຄືໃຜ? __________________________________________

**26** ທີ່ພະເຢຊູບອກວ່າຈະດື່ມນ້ຳອະງຸ່ນໃໝ່ກັບພວກເຂົາໃນລາຊະແຜ່ນດິນພະບິດາໝາຍເຖິງຫຍັງ? ____________________________________________________________

**27** ກ. ເມື່ອພະເຢຊູເຕືອນພວກສາວົກວ່າໃນຄືນວັນນີ້ ທ່ານທຸກຄົນຈະສະດຸດໃຈເພາະເຮົາເປໂຕຕອບຢ່າງໃດ? (ຂໍ້ 33) __________________________________________

ຂ. ໃນຂໍ້ 35 ເປໂຕຕອບພະອົງວ່າຢ່າງໃດ? __________________________________

______________________________________________________________

**28** ແລ້ວເຫັນໃນມັດທາຍບົດ 26 ຂໍ້ 70, 72 ແລະ 74 ເປໂຕເຮັດຫຍັງ? _______________

**29** ເປໂຕສັນຍາຫຼາຍຢ່າງ ແຕ່ເພິ່ນບໍ່ເຮັດຕາມຄຳສັນຍາ! ເຫັນພະເຢຊູບອກວ່າເປໂຕຈະປະຕິເສດພະອົງ ແລ້ວເປໂຕຕອບວ່າຈະບໍ່ປະຕິເສດແມ່ນໃຜກ່າວຂັດແຍ້ງໃຜ? ____________

**30** ເປໂຕຫຼົງຜິດຫຼາຍປະການ ປະການທຳອິດຄື ເມື່ອພະອົງເຕືອນເປໂຕລ່ວງໜ້າວ່າຈະປະຕິເສດພະອົງ. ເປໂຕກ່າວ ຢ່າງໃດ? ________________________________________

**31** ໃຫ້ເບິ່ງຂໍ້ 33 ອີກ. ເປໂຕຮັບຮູ້ວ່າຜູ້ອື່ນອາດຈະປະຕິເສດພະອົງແຕ່ເພິ່ນອວດຕົວວ່າຈະບໍ່ປະຕິເສດພະອົງ ຈັກເທື່ອ. ໃນການນັ້ນເພິ່ນຫຼົງຜິດຢ່າງໃດ? (ເລືອກ)

ກ. ເພິ່ນຖືວ່າຕົນເອງດີກ່ອນໝູ່.

ຂ. ຍອມຮັບຮູ້ຄວາມອ່ອນແອຂອງຕົນເອງ.

ຄ. ໄວ້ໃຈວ່າຜູ້ອື່ນນັ້ນຈະຊ່ວຍໃຫ້ເພິ່ນເຮັດການດີ.

**32** ມາເຖິງນີ້ ເຫັນວ່າເປໂຕຫຼົງຜິດໃນສອງເລື່ອງຄື: (ຕື່ມຄວາມທີ່ຂາດ)

ກ. ເປໂຕກ່າວ ________________________ ພະອົງ.

ຂ. ເປໂຕຖືວ່າ ___________________________ ໝູ່.

**33** ບໍ່ເຫັນເປໂຕອ້ອນວອນຂໍໃຫ້ພະເຢຊູຊ່ວຍຈັກເທື່ອ. ສະແດງວ່າເປໂຕໄວ້ໃຈກັບໃຜ? (ເລືອກ)

ກ. ພະເຢຊູ ຂ. ຕົນເອງ ຄ. ໝູ່ເພື່ອນ

**34** ບັດນີ້ ເຫັນຄວາມຜິດຂອງເປໂຕ 3 ປະການແລ້ວ (ຕື່ມຄວາມຂາດ)

ກ. ເປໂຕ ___________________________ ພະອົງ.

ຂ. ເປໂຕ ______________________________ ໝູ່.

ຄ. ເປໂຕ ________________________ ໃນຕົນເອງ.

**35** ເປໂຕຫຼົງຜິດໃນສາມດ້ານເຫຼົ່ານັ້ນ ຈຶ່ງເປີດໂອກາດໃຫ້ເພິ່ນປະຕິເສດພະອົງຕໍ່ໄປ. (ໃຫ້ອ່ານ ມທ 26:40-41.)

ກ. ເປໂຕສົມຄວນຈະເຮັດຫຍັງໃນເວລານັ້ນ? ______________________________

ຂ. ແທນທີ່ຈະອ້ອນວອນ ພະອົງເຫັນເຂົາເຮັດຫຍັງ? __________________________

ຄ.ແທນທີ່ຈະອ້ອນວອນ ເປັນຫຍັງເພິ່ນຈຶ່ງນອນຫຼັບ (ໝາຍ √ ເອົາສອງຂໍ້)

1. ______ ເພາະເພິ່ນໄວ້ວາງໃຈກັບພະເຢຊູ.
2. ______ ເພາະເພິ່ນໄວ້ວາງໃຈກັບຕົນເອງ.
3. ______ ເພາະເພິ່ນຖືວ່າຕົນເອງແຂງແຮງກວ່າໝູ່.
4. ______ ເພາະເພິ່ນອ້ອນວອນຫຼາຍແລ້ວ.



**36** ເນື່ອງຈາກເປໂຕໄວ້ໃຈກັບຕົນເອງແລະຖືວ່າຕົນເອງດີກວ່າໝູ່ ເປໂຕບໍ່ໄດ້ອ້ອນວອນແລ້ວຜົນສຸດທ້າຍເພິ່ນຈຶ່ງໄດ້ປະຕິເສດພະອົງ. ໃຫ້ອ່ານ ມທ 26:75. ເປໂຕລະນຶກເຖິງຄຳເຕືອນຂອງພະອົງໃນເວລາໃດ? (ເລືອກ)

ກ. ກ່ອນທີ່ບໍ່ໄດ້ປະຕິເສດພະອົງເທື່ອ. ຂ. ໃນເວລາດຽວທີ່ຈະປະຕິເສດພະອົງ.

ຄ. ຫຼັງຈາກປະຕິເສດພະອົງແລ້ວ.

**37** ເປໂຕອາດຈະປະຕິເສດພະອົງໂດຍບໍ່ຈື່ຄຳເຕືອນຂອງພະອົງ. ເມື່ອພະອົງກຳລັງເຕືອນເປໂຕເພິ່ນກ່າວຫຍັງ? ______________________________________________

**38** ໃນລາຍຊື່ຄຳກ່າວຕໍ່ໄປນີ້:

* ໃຫ້ຂຽນຄຳ "ຂັດແຍ້ງ" ຂ້າງຄຳທີ່ຂັດແຍ້ງພະຄຳຂອງພະເຈົ້າ.
* ໃຫ້ຂຽນຄຳ "ຖືວ່າຕົວດີກວ່າ" ຂ້າງຄຳທີ່ສະແດງທ່າທີນັ້ນ.
* ໃຫ້ຂຽນຄຳ "ໄວ້ໃຈໃນຕົນເອງ" ຂ້າງຄຳທີ່ສະແດງຄວາມອວດຕົວ.

ກ. __________ "ພະຄຳພີສອນຢ່າງນັ້ນກໍຕາມ ແຕ່ບໍ່ແມ່ນຄວາມຈິງ"

ຂ. __________ "ບໍ່ຕ້ອງອ້ອນວອນເພື່ອທຸກຈຸດນ້ອຍໆ ຈົ່ງໄວ້ໃຈແຕ່ກັບຕົນເອງທີ່ຈະແກ້ໄດ້."

ຄ. __________ "ທ້າວ ກ ຕົກໃນບາບກໍແມ່ນຢູ່ ແຕ່ຂ້ອຍຈະບໍ່ຕົກຢ່າງນັ້ນຈັກເທື່ອ."

ງ. __________ "ຂ້ອຍຍິ່ງມີບັນຫາ ກໍຍິ່ງເຮັດດີໄດ້ ເພາະຮູ້ວິທີບັງຄັບຕົນເອງ."

ຈ. __________ "ຖ້າມີຄວາມຮູ້ດ້ານວິທະຍາສາດ ບໍ່ຕ້ອງເຊື່ອພະທຳພີອີກ."

ສ. __________ "ຄົນໜຸ່ມບໍ່ຮູ້ຖືລະບຽບ ມີແຕ່ພວກເຖົ້າແກ່ຢ່າງຂ້ອຍນີ້ທີ່ຮູ້ລະບຽບດີ."

**39** ໃນຄຳທຳນວາຍທີ່ກ່າວອ້າງຈາກພະທຳຊາຂາລີຢາ ໃນມັດທາຍ 26:31

ກ.ຜູ້ລ້ຽງແກະທີ່ຈະຖືກປະຫານຊີວິດ ອ້າງເຖິງໃຜ? ______________________________

ຂ.ຝູງແກະທີ່ຈະແຕກຊະກັນໄປຄືໃຜ? ______________________________

**40** ເປໂຕຫຼົງຜິດໃນ 3 ດ້ານໃດກ່ອນປະຕິເສດພະອົງ? (ຕື່ມຄວາມທີ່ຂາດ)

ກ. ເພິ່ນ ______________________________ ພະອົງ.

ຂ. ເພິ່ນ ______________________________ ໝູ່.

ຄ. ເພິ່ນ ______________________________ ເອງ.

**41** ເທື່ອໃດທີ່ເຫັນວ່າເຮົາຈະລົ້ມລົງເໝືອນດັ່ງເປໂຕ ຈົ່ງລະວັງໃຫ້ດີຢ້ານວ່າຜົນໄດ້ຮັບຂອງຄວາມຜິດເຫຼົ່ານັ້ນຈະເຮັດໃຫ້ເຮົາປະຕິເສດພະອົງດ້ວຍ. ມີຄວາມຜິດ 3 ປະການໃດທີ່ອາດຈະປະກົດມາກ່ອນທີ່ເຮົາຈະປະຕິເສດພະອົງ?

ກ. ______________________________________________

ຂ. ______________________________________________

ຄ. ______________________________________________

*ໃຫ້ເປີດບົດເສງທີ 17*

**ຄຳຕອບ:**

**1** *ກ. ປັດສະຄາ ຂ. ເປໂຕ ໂຢຮັນ ຄ. ເບດທາເນຍ ງ. ເຢລູຊາເລັມ ຈ. ແກະ ສ. ພະວິຫານ ຊ. ປະໂລຫິດ ຍ. 250.000 ດ. ພະເຢຊູ ຕ. ເລືອດແກະ ຖ. ຫ້ອງຊັ້ນເທິງ*

**ຄຳຕອບ (ຕໍ່):**

**2** *ກ. ເທດສະການກິນເຂົ້າຈີ່ບໍ່ມີເຊື້ອແປ້ງ ຂ. ເທດສະການປັດສະຄາ*

**3** *ກ. ເທດສະການປັດສະຄາ ຂ. ເທດສະການກິນເຂົ້າຈີ່ບໍ່ມີເຊື້ອແປ້ງ.*

**4** *ເທດສະການປັດສະຄາ ເທດສະການກິນເຂົ້າຈີ່ບໍ່ມີເຊື້ອແປ້ງ*

**5** *ການຮັບປົດປ່ອຍຈາກການເປັນທາດໃນເອຢິບ.*

**6** *ເຂົ້າຈີ່ບໍ່ມີເຊື້ອແປ້ງ*

**7** *ກ. 7 ວັນ ຂ. ວັນທີ 14*

**8** *ວັນພະທັດ*

**9** *ກ. ກຳນົດ... ປັດສະຄາ ຂ. ປີທີ່ສຳເລັດ ຄ. ຄວາມຕາຍຂອງພະອົງ*

**10** *ກ. ປັດສະຄາ ຂ. ເທດສະການກິນເຂົ້າຈີ່ບໍ່ມີເຊື້ອແປ້ງ*
*ຄ. ການເປັນທາດໃນເອຢິບ ງ. ເຂົ້າຈີ່ບໍ່ມີເຊື້ອແປ້ງ ຈ. ວັນພະທັດ ສ. ຈະຕາຍ*
*ຊ. ຂອງເອຢິບ ຍ. ຂອງຄວາມບາບ*

**11** *ກ. ໂຕະ ຂ. ເບື້ອງກາຍ ຄ. ນອນແຄງກິນ*

**12** *ກ. ເຮົາ ຂ. ເຮົາ*

**13** *ກ. ເຂົ້າຈີ່ ຂ. ຈອກ*

**14** *ກ. ຕ່ຳ ຂ. ນອນແຄງຂ້າງຊ້າຍ*

**15** *ກ. ພະສັນຍາ ຂ. ການຕົກລົງກັນລະຫວ່າງສອງຝ່າຍ*

**16** *ຄ ຖືກ*

**17** *ພະເຈົ້າກັບໄພ່ພົນຂອງພະອົງ*

**18** *ໃໝ່*

**19** *ພະເຢຊູ ພະເຢຊູ*

**20** *ກ. ພະເຢຊູ ຂ. ສອງຝ່າຍ ຄ. ພະເຈົ້າກັບໄພ່ພົນຂອງພະອົງ*

**21** *ກ ງ ສ ຖືກ*

**22** *ກ ຖືກ*

**23** *ສະຫວັນ*

**24** *ຊຂຢ 13:7*

**25** *ກ. ພະເຢຊູ ຂ. ພວກລູກສິດພະອົງ ຄ. ພະເຢຊູ ງ. ພວກລູກສິດ*

**26** *ການຮ່ວມສາມັກຄີທຳໃນສະຫວັນ*

**27** *ກ."ຖ້າຄົນທັງປວງຈະສະດຸດໃຈເພາະທ່ານ ຝ່າຍຂ້ານ້ອຍຈະບໍ່ສະດຸດໃຈຈັກເທື່ອ"*
*ຂ."ເຖິງແມ່ນຂ້ານ້ອຍຈະຕ້ອງຕາຍກັບທ່ານ ຂ້ານ້ອຍຈະບໍ່ປະຕິເສດທ່ານຈັກເທື່ອ"*

**28** *ປະຕິເສດພະອົງ*

**29** *ເປໂຕກ່າວຂັດແຍ້ງພະອົງ*

**30** *ຂັດແຍ້ງ*

**ຄຳຕອບ (ຕໍ່):**

**31** *ກ ຖືກ*

**32** *ກ. ຂັດແຍ້ງ ຂ. ຕົນເອງດີກວ່າ*

**33** *ຂ ຖືກ*

**34** *ກ. ກ່າວຂັດແຍ້ງ ຂ. ຖືວ່າຕົນເອງດີກວ່າ ຄ. ໄວ້ໃຈ*

**35** *ກ. ອ້ອນວອນ ຂ. ນອບໜູ້ບ ຄ. 2 ແລະ 3 ຖືກ*

**36** *ຄ ຖືກ*

**37** *ຂັດແຍ້ງ*

**38** *ກ. ຂັດແຍ້ງ ຂ. ໄວ້ໃຈໃນຕົນເອງ ຄ. ຖືວ່າຕົວດີກວ່າ*
*ງ. ໄວ້ໃຈໃນຕົນເອງ ຈ. ຂັດແຍ້ງ ສ. ຖືວ່າຕົວດີກວ່າ*

**39** *ກ. ພະເຢຊູ ຂ. ພວກລູກສິດ*

**40** *ກ. ກ່າວຂັດແຍ້ງ ຂ. ຖືວ່າຕົນເອງດີກວ່າ ຄ. ໄວ້ໃຈໃນຕົນ*

**41** *ກ. ເຮົາອາດຈະກ່າວຂັດແຍ້ງພະອົງ ຂ. ເຮົາອາດຈະຖືວ່າຕົນເອງດີກວ່າໝູ່*
*ຄ. ເຮົາອາດຈະໄວ້ໃຈໃນຕົນເອງ*